ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 687/ປທສ
ນະຄອນຫຼວງວຽງຈັນ, ວັນທີ 20 ກຸມພາ 2020

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ລະຫັດຊື່ອິນເຕີເນັດ

- ອີງຕາມ ກົດໝາຍວ່າດ້ວຍເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ ເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ ອິນເຕີເນັດ ລະຫັດຊື່ອິນເຕີເນັດຂອງ ສປປ ລາວ ເລກທີ 164/ລບ, ລົງວັນທີ 21 ມີນາ 2012;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເລກທີ 22/ນຍ, ລົງວັນທີ 16 ມັງກອນ 2017.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມກວດກາ ການດຳເນີນທຸລະກິດ, ການຈົດທະບຽນນຳໃຊ້ລະຫັດອິນເຕີເນັດສູງສຸດແຫ່ງຊາດ ຂອງ ສປປ ລາວ ແລະ ລະຫັດຊື່ອິນເຕີເນັດອື່ນ ທີ່ໃຫ້ບໍລິການພາຍໃນ ສປປ ລາວ ເພື່ອໃຫ້ມີຄວາມສະດວກ, ວ່ອງໄວ ແລະ ຍຸຕິທຳ ຮັບປະກັນຄວາມປອດໄພ ແລະ ມີຄຸນນະພາບສູງ, ແນໃສ່ສົ່ງເສີມການນຳໃຊ້ລະຫັດຊື່ອິນເຕີເນັດ ເຂົ້າໃນການສະໜອງບໍລິການຜ່ານທາງເອເລັກໂຕຣນິກ ໃຫ້ມີຄວາມສະດວກ ແລະ ທົ່ວເຖິງ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 ລະຫັດຊື່ອິນເຕີເນັດ**

ລະຫັດຊື່ອິນເຕີເນັດ ແມ່ນຊື່ທີ່ຖືກນຳໃຊ້ ເພື່ອລະບຸແທນທີ່ຢູ່ຂອງເລກໝາຍອິນເຕີເນັດ (IP) ຂອງເຄື່ອງແມ່ຂ່າຍເທິງລະບົບອິນເຕີເນັດ ຊຶ່ງຖືກກຳນົດຕາມລຳດັບໂດຍຂັ້ນດ້ວຍເຄື່ອງໝາຍຈ້ຳເມັດ "." ເພື່ອໃຫ້ສາມາດຈົດຈຳໄດ້ງ່າຍ.

ການຄຸ້ມຄອງລະຫັດຊື່ອິນເຕີເນັດ ແມ່ນການຕິດຕາມ, ກວດກາ, ອະນຸຍາດໃຫ້ບໍລິການ ແລະ ນຳໃຊ້ ລະຫັດຊື່ອິນເຕີເນັດ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລະຫັດຊື່ອິນເຕີເນັດສູງສຸດປະເທດ** (Country Code Top Level Domain Name ຫຼື ccTLD) ໝາຍເຖິງ ລະຫັດຊື່ອິນເຕີເນັດຂັ້ນສູງສຸດຂອງແຕ່ລະປະເທດ ທີ່ໄດ້ຮັບການມອບໝາຍຈາກອົງການຄຸ້ມຄອງລະຫັດຊື່ ແລະ ເລກໝາຍອິນເຕີເນັດສາກົນ (ICANN) ເພື່ອໃຫ້ແຕ່ລະປະເທດຄຸ້ມຄອງ ແລະ ນຳໃຊ້;

2. **ລະຫັດຊື່ອິນເຕີເນັດທົ່ວໄປ** (Generic Top Level Domain Name ຫຼື gTLD) ໝາຍເຖິງ ລະຫັດຊື່ອິນເຕີເນັດສາກົນທີ່ລົງທ້າຍດ້ວຍ: .com, .net, .edu, .org, .int, .biz, .info ແລະ ອື່ນໆ;

3. **ລະຫັດຊື່ອິນເຕີເນັດສາກົນ** ໝາຍເຖິງ ລະຫັດຊື່ອິນເຕີເນັດສູງສຸດຂອງປະເທດອື່ນ ແລະ ລະຫັດຊື່ອິນເຕີເນັດທົ່ວໄປ;

4. **ລະຫັດຊື່ອິນເຕີເນັດສູງສຸດແຫ່ງຊາດ** ໝາຍເຖິງ ລະຫັດຊື່ຂັ້ນສູງສຸດ ຂອງ ສປປ ລາວ ທີ່ໄດ້ຮັບການອະນຸຍາດມອບໝາຍຈາກອົງການ ICANN ເພື່ອຄຸ້ມຄອງ ແລະ ນຳໃຊ້ ຊຶ່ງລົງທ້າຍດ້ວຍ ດ໋ອດແອວເອ ".LA" ແລະ ລົງທ້າຍດ້ວຍດ໋ອດລາວ ".ລາວ";

5. **ລະຫັດຊື່ອິນເຕີເນັດທີ່ເປັນພາສາລາວ** (Internationalized Domain Name ຫຼື IDN) ໝາຍເຖິງ ລະຫັດຊື່ອິນເຕີເນັດທີ່ນຳໃຊ້ພາສາລາວ ເພື່ອຕັ້ງຊື່ທີ່ລົງທ້າຍດ້ວຍ ດ໋ອດລາວ ".ລາວ" ຫຼື ດ໋ອດແອວເອ ".LA" ຊຶ່ງລະຫັດຊື່ອິນເຕີເນັດດັ່ງກ່າວ ອາດຈະເປັນຕົວອັກສອນລາວທັງໝົດ ຫຼື ອັກສອນລາວປະສົມກັບຕົວອັກສອນສາກົນ ແລະ ຕົວເລກ ຕົວຢ່າງ: ກຂຄ.ລາວ, ກຂຄ.la;

6. **ລະຫັດຊື່ອິນເຕີເນັດລາວ** ໝາຍເຖິງ ລະຫັດຊື່ອິນເຕີເນັດແຕ່ລະຂັ້ນ ທີ່ຢູ່ພາຍໃຕ້ລະຫັດຊື່ອິນເຕີເນັດສູງສຸດແຫ່ງຊາດ ຫຼື ລະຫັດຊື່ອິນເຕີເນັດທີ່ເປັນພາສາລາວ;

7. **ລະຫັດຊື່ອິນເຕີເນັດ ຂັ້ນສອງ** ໝາຍເຖິງ ລະຫັດຊື່ອິນເຕີເນັດ ທີ່ປະກອບດ້ວຍຊື່ ແລະ ລົງທ້າຍດ້ວຍ ".LA" ຫຼື ".ລາວ" ຕົວຢ່າງ: example.la, ຮູບແບບ.ລາວ;

8. **ລະຫັດຊື່ອິນເຕີເນັດ ຂັ້ນສາມ** ໝາຍເຖິງ ລະຫັດຊື່ອິນເຕີເນັດ ທີ່ປະກອບດ້ວຍຊື່ ຕາມດ້ວຍຈ້ຳເມັດ ຕາມດ້ວຍປະເພດຂອງອົງກອນ ຫຼື ຊື່ທາງດ້ານເຄື່ອງໝາຍການຄ້າ ແລະ ລົງທ້າຍດ້ວຍ ".LA" ຫຼື ".ລາວ". ຕົວຢ່າງ: example.gov.la, ຮູບແບບ.ລບ.ລາວ;

9. **ອົງການຄຸ້ມຄອງລະຫັດຊື່ ແລະ ເລກໝາຍອິນເຕີເນັດສາກົນ** (Internet Corporation for Assigned Names and Numbers ຫຼື ICANN) ໝາຍເຖິງ ໜ່ວຍງານລະດັບສາກົນທີ່ຮັບຜິດຊອບຈັດສັນເລກໝາຍອິນເຕີເນັດ (IP) ແລະ ຄຸ້ມຄອງລະບົບລະຫັດຊື່ອິນເຕີເນັດ (Domain Name System) ເພື່ອໃຫ້ລະບົບເຄືອຂ່າຍອິນເຕີເນັດສາມາດເຮັດວຽກດ້ວຍຄວາມສະຖຽນລະພາບ;

10. **ເລກໝາຍອິນເຕີເນັດ** (Internet Protocol ຫຼື IP) ໝາຍເຖິງ ເລກໝາຍລະຫັດທີ່ຢູ່ເທິງເຄືອຂ່າຍຂອງລະບົບອຸປະກອນ ແລະ ຄອມພິວເຕີ ທີ່ໃຫ້ບໍລິການທາງເຄືອຂ່າຍອິນເຕີເນັດ ຊຶ່ງປະກອບດ້ວຍເລກໝາຍອິນເຕີເນັດຕາມແຕ່ລະຍຸກເປັນຕົ້ນ IPv4, IPv6;

11. **ລະບົບລະຫັດຊື່ອິນເຕີເນັດ** (Domain Name System ຫຼື DNS) ໝາຍເຖິງ ລະບົບທີ່ເຮັດໜ້າທີ່ປ່ຽນລະຫັດຊື່ອິນເຕີເນັດມາເປັນເລກໝາຍອິນເຕີເນັດ ຫຼື ປ່ຽນເລກໝາຍອິນເຕີເນັດມາເປັນລະຫັດຊື່ອິນເຕີເນັດ;

12. **ລະບົບເຄື່ອງແມ່ຂ່າຍລະຫັດຊື່ອິນເຕີເນັດ** (Domain Name System Server ຫຼື DNS Server) ໝາຍເຖິງ ລະບົບທີ່ເກັບຂໍ້ມູນຂອງລະຫັດຊື່ອິນເຕີເນັດ, ເຊື່ອມລະຫັດຊື່ອິນເຕີເນັດ ແລະ ເລກໝາຍອິນເຕີເນັດເຂົ້າກັນ;

13. **ການຈົດທະບຽນລະຫັດຊື່ອິນເຕີເນັດ** ໝາຍເຖິງ ການປະຕິບັດຕາມລະບຽບຂັ້ນຕອນ ເພື່ອເຮັດໃຫ້ລະຫັດຊື່ອິນເຕີເນັດຖືກຮັບຮອງ, ເປີດນຳໃຊ້ ແລະ ມີຕົວຕົນໃນລະບົບ ອິນເຕີເນັດ. ການຈົດທະບຽນລະຫັດຊື່ອິນເຕີເນັດ ແຫ່ງຊາດ ແມ່ນຕ້ອງໄດ້ປະຕິບັດຕາມຂັ້ນຕອນ ແລະ ລະບຽບການເພື່ອເຮັດໃຫ້ລະຫັດຊື່ອິນເຕີເນັດມີຂໍ້ມູນຖືກຕ້ອງຄົບຖ້ວນ ຕາມການຄຸ້ມຄອງຂອງລະບົບລະຫັດຊື່ອິນເຕີເນັດ ແຫ່ງຊາດ ຂອງ ສປປ ລາວ;

14. **ການໃຊ້ບໍລິການລະຫັດຊື່ອິນເຕີເນັດ** ໝາຍເຖິງ ພາຍຫຼັງສຳເລັດຂັ້ນຕອນການຈົດທະບຽນ ກັບຜູ້ໃຫ້ບໍລິການຈົດທະບຽນແລ້ວ, ເຈົ້າຂອງ ຫຼື ຜູ້ຈົດທະບຽນລະຫັດຊື່ອິນເຕີເນັດຈະຕ້ອງໄດ້ເສຍຄ່ານຳໃຊ້ບໍລິການເປັນປີ ໃຫ້ຄົບຖ້ວນ ແລະ ທັນກຳນົດເວລາ ເພື່ອຮັກສາສິດການໃຊ້ບໍລິການຂອງລະຫັດຊື່ອິນເຕີເນັດ ດັ່ງກ່າວ;

15. **ການນຳໃຊ້ລະຫັດຊື່ອິນເຕີເນັດ** ໝາຍເຖິງ ການເຊື່ອມໂຍງ ດ້ານເຕັກນິກຂອງລະຫັດຊື່ອິນເຕີເນັດເຂົ້າກັບເລກໝາຍອິນເຕີເນັດ (IP) ເພື່ອເປັນການປົກປ້ອງສິດຜົນປະໂຫຍດເຊັ່ນ: ເຄື່ອງໝາຍທາງດ້ານການຄ້າ, ຊື່ບໍລິການ, ຊື່ອົງກອນ ຫຼື ອື່ນໆ ເພື່ອຫຼີກລ້ຽງຈາກການຄອບຄອງຂອງບຸກຄົນອື່ນທີ່ບໍ່ກ່ຽວຂ້ອງ;

16. **ກອງທະບຽນ (Registry)** ໝາຍເຖິງ ຜູ້ຄຸ້ມຄອງລະບົບລະຫັດຊື່ອິນເຕີເນັດສູງສຸດແຫ່ງຊາດລາວ ໂດຍແມ່ນສູນອິນເຕີເນັດແຫ່ງຊາດ (ສອຊ) ເປັນຜູ້ຮັບຜິດຊອບ;

17. **ນາຍທະບຽນ (Registrar)** ໝາຍເຖິງ ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ ຊຶ່ງໄດ້ຮັບອະນຸຍາດຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

18. **ຜູ້ຈົດທະບຽນ (Registrant)** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ຫຼື ອົງການຈັດຕັ້ງ ທີ່ຂໍຈົດທະບຽນ ແລະ ນຳໃຊ້ບໍລິການລະຫັດຊື່ອິນເຕີເນັດລາວ ແລະ ລະຫັດຊື່ອິນເຕີເນັດສາກົນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນເຄື່ອນໄຫວ ຫຼື ດຳເນີນທຸລະກິດກ່ຽວກັບລະຫັດຊື່ອິນເຕີເນັດ.

## ໝວດທີ 2
## ລະຫັດຊື່ອິນເຕີເນັດສູງສຸດແຫ່ງຊາດ

**ມາດຕາ 5 ໂຄງປະກອບຂອງລະຫັດຊື່ອິນເຕີເນັດສູງສຸດແຫ່ງຊາດ**

ລະຫັດຊື່ອິນເຕີເນັດແຫ່ງຊາດທີ່ສູນອິນເຕີເນັດແຫ່ງຊາດ ຄຸ້ມຄອງປະກອບມີ ດັ່ງນີ້:

1. ລະຫັດຊື່ອິນເຕີເນັດຂັ້ນສອງ;
2. ລະຫັດຊື່ອິນເຕີເນັດຂັ້ນສາມ.

**ມາດຕາ 6 ຮູບແບບການນຳໃຊ້ລະຫັດຊື່ອິນເນັດ ຂັ້ນສາມ**

ສູນອິນເຕີເນັດແຫ່ງຊາດ ໃນນາມເປັນຜູ້ຄຸ້ມຄອງໄດ້ມີການກຳນົດແບ່ງກຸ່ມລະຫັດຊື່ອິນເຕີເນັດຂັ້ນສາມ ເພື່ອໃຫ້ບໍລິການຈົດທະບຽນຕາມປະເພດການນຳໃຊ້ ແບບທົ່ວໄປ ແລະ ແບບສະເພາະ ດັ່ງນີ້:

1. .GOV.LA, .ລັດຖະບານ.ລາວ: ກຳນົດນຳໃຊ້ສຳລັບ ອົງການຈັດຕັ້ງພັກ-ລັດ ທັງສູນກາງ ແລະ ບັນດາທ້ອງຖິ່ນ;
2. .MIL.LA, .ທະຫານ.ລາວ: ກຳນົດນຳໃຊ້ສຳລັບ ອົງກອນທີ່ເຄື່ອນໄຫວໃນຂົງເຂດການທະຫານ;

3. .EDU.LA, .ສຶກສາ.ລາວ: ກຳນົດນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ເຄື່ອນໄຫວໃນຂົງເຂດການສຶກສາ, ຝຶກອົບຮົມ;
4. .ORG.LA, .ອົງການ.ລາວ: ກຳນົດນຳໃຊ້ສຳລັບອົງການຈັດຕັ້ງພາຍໃນ ແລະ ສາກົນ;
5. .COM.LA, .ບໍລິສັດ.ລາວ: ກຳນົດນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ເຄື່ອນໄຫວໃນຂົງເຂດການຄ້າ, ດຳເນີນທຸລະກິດ ຫຼື ທົ່ວໄປ;
6. .BIZ.LA, .ທຸລະກິດ.ລາວ: ກຳນົດນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ເຄື່ອນໄຫວໃນຂົງເຂດດຳເນີນທຸລະກິດ;
7. .NET.LA, .ເຄືອຂ່າຍ.ລາວ: ກຳນົດນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ເຄື່ອນໄຫວໃນຂົງເຂດ ພັດທະນາ ແລະ ໃຫ້ບໍລິການຜ່ານ ເຄືອຂ່າຍ ອິນເຕີເນັດ;
8. .INT.LA, .ສາກົນ.ລາວ: ກຳນົດນຳໃຊ້ສຳລັບ ອົງການຈັດຕັ້ງສາກົນ;
9. .INFO.LA, .ຂໍ້ມູນ.ລາວ: ກຳນົດນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ເຄື່ອນໄຫວໃນຂົງເຂດດ້ານການສະໜອງຂໍ້ມູນຂ່າວສານ;
10. .NAME.LA, .ຊື່.ລາວ: ກຳນົດນຳໃຊ້ສຳລັບ ຊື່ອົງກອນ ຫຼື ຊື່ທາງດ້ານເຄື່ອງໝາຍການຄ້າ, ຕົວຢ່າງ *.LAO.LA, *.MPT.LA, *.ປທສ.ລາວ;
11. ລະຫັດຊື່ອິນເຕີເນັດອື່ນ ທີ່ທາງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ກຳນົດ.

ລະຫັດຊື່ອິນເຕີເນັດຂັ້ນສາມ ຈັດແບ່ງຕາມຂົງເຂດການປົກຄອງ: ແມ່ນບັນດາລະຫັດຊື່ອິນເຕີເນັດ ທີ່ໄດ້ຮັບການຕັ້ງຊື່ຕາມຊື່ຂອງແຕ່ລະແຂວງ, ນະຄອນຫຼວງວຽງຈັນ, ຕົວເມືອງ ທີ່ຂຶ້ນກັບສູນກາງທີ່ໄດ້ຂຽນເປັນຄວາມໝາຍໃນພາສາລາວ ຫຼື ພາສາສາກົນ ຕົວຢ່າງ *.VTE.LA ; *.SVK.LA, . *.ນະຄອນຫຼວງວຽງຈັນ.ລາວ.

## ໝວດທີ 3
## ການຈົດທະບຽນ ແລະ ການນຳໃຊ້ ລະຫັດຊື່ອິນເຕີເນັດລາວ

### ມາດຕາ 7 ຫຼັກການໃນການຈົດທະບຽນ ແລະ ນຳໃຊ້ລະຫັດຊື່ອິນເຕີເນັດລາວ

ຫຼັກການ ໃນການຈົດທະບຽນ ແລະ ນຳໃຊ້ລະຫັດຊື່ອິນເຕີເນັດ ລາວ ມີດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ມີສິດຈົດທະບຽນ ແລະ ນຳໃຊ້ລະຫັດຊື່ອິນເຕີເນັດລາວ. ບັນດາລະຫັດຊື່ອິນເຕີເນັດລາວແຕ່ລະຂັ້ນ ລ້ວນແລ້ວແຕ່ມີຄຸນຄ່າການນຳໃຊ້ແບບດຽວກັນ;

2. ການຈົດທະບຽນລະຫັດຊື່ອິນເຕີເນັດ ແມ່ນບົນພື້ນຖານສິດສະເໝີພາບ ໂດຍບໍ່ຈຳແນກການປະຕິບັດ. ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງໃດທີ່ຈົດທະບຽນກ່ອນ ຈະມີສິດນຳໃຊ້ກ່ອນ ແຕ່ຕ້ອງຢູ່ບົນພື້ນຖານມີຄວາມກ່ຽວຂ້ອງ;

3. ລະຫັດຊື່ອິນເຕີເນັດລາວ ທີ່ໄດ້ຈົດທະບຽນນຳໃຊ້ໃນລະບົບລະຫັດຊື່ອິນເຕີເນັດ ແຕ່ບໍ່ໄດ້ຈົດທະບຽນຊັບສິນທາງປັນຍາ ແມ່ນຈະບໍ່ໄດ້ຮັບການປົກປ້ອງສິດໃນກົດໝາຍກ່ຽວກັບຊັບສິນທາງປັນຍາ. ກົງກັນຂ້າມຫາກບໍ່ໄດ້ຈົດທະບຽນ ນຳໃຊ້ໃນລະບົບລະຫັດຊື່ອິນເຕີເນັດ ແຕ່ໄດ້ຈົດທະບຽນປົກປ້ອງສິດໃນທາງກົດໝາຍກ່ຽວກັບຊັບສິນທາງປັນຍາ ກໍ່ຈະບໍ່ໄດ້ຮັບການປົກປ້ອງສິດໃນລະບົບເຄືອຂ່າຍອິນເຕີເນັດເຊັ່ນກັນ;

4. ລະຫັດຊື່ອິນເຕີເນັດລາວທີ່ເປັນຊື່ ຫຼື ພົວພັນເຖິງການເຄື່ອນໄຫວຂອງບັນດາກະຊວງ, ອົງການຈັດຕັ້ງພັກ-ລັດ, ວິລະຊົນ ຈະໄດ້ຮັບສິດໃນການຄຸ້ມຄອງເປັນພິເສດ. ອົງການຈັດຕັ້ງພາກລັດ ມີໜ້າທີ່ຮັບຜິດຊອບຈົດທະບຽນຈັບຈອງເພື່ອປົກປ້ອງສິດການນຳໃຊ້ຂອງຕົນ;

5. ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ມີຈຸດປະສົງຈົດທະບຽນລະຫັດຊື່ອິນເຕີເນັດລາວ ຕ້ອງແຈ້ງຊື່ທີ່ຈະຈົດຢ່າງຊັດເຈນ ເພື່ອຫຼີກລ້ຽງຄວາມເຂົ້າໃຈຜິດທາງດ້ານຄວາມໝາຍ ແລະ ການອອກສຽງສຳນຽງ ພ້ອມທັງຮັບປະກັນບໍ່ໃຫ້ມີຄຳສັບທີ່ມີຄວາມໝາຍໃນລັກສະນະເປັນການແຊກແຊງ, ທຳລາຍຜົນປະໂຫຍດຂອງຊາດ ຫຼື ບໍ່ເໝາະສົມໃນທາງສັງຄົມ, ຮີດຄອງປະເພນີຂອງບັນດາຊົນຊາດຊົນເຜົ່າ ແລະ ສາດສະໜາ;

6. ບັນດາອົງການຈັດຕັ້ງພາກລັດ ຕ້ອງນຳໃຊ້ລະຫັດຊື່ອິນເຕີເນັດລາວ;

7. ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ໄດ້ຈົດທະບຽນນຳໃຊ້ລະຫັດຊື່ອິນເຕີເນັດລາວ ສາມາດ ສ້າງລະຫັດຊື່ອິນເຕີເນັດຂັ້ນຖັດໄປເອງໄດ້, ແຕ່ຕ້ອງຄຸ້ມຄອງ ແລະ ນຳໃຊ້ ສະເພາະກົມກອງ, ໜ່ວຍງານ ຫຼື ບຸກຄົນພາຍໃນອົງການຈັດຕັ້ງຂອງຕົນ ແລະ ນຳໃຊ້ສະເພາະກ່ຽວກັບວຽກງານຂອງຕົນເທົ່ານັ້ນ;

8. ລະຫັດຊື່ອິນເຕີເນັດລາວ ຕ້ອງປະກອບດ້ວຍບັນດາພະຍັນຊະນະ ແລະ ສະຫຼະສາກົນ ແຕ່ a ຫາ z ໂດຍບໍ່ຈຳແນກຕົວພິມໃຫຍ່ ຫຼື ນ້ອຍ, ຕົວເລກແຕ່ 0 ຫາ 9. ສຳລັບລະຫັດຊື່ອິນເຕີເນັດ ທີ່ເປັນພາສາລາວ ແມ່ນສາມາດປະກອບເພີ່ມພະຍັນຊະນະ, ສະຫຼະ ແລະ ວັນນະຍຸດໃນພາສາລາວ;

9. ລະຫັດຊື່ອິນເຕີເນັດລາວ ສາມາດປະກອບດ້ວຍເຄື່ອງໝາຍຂີດຕໍ່ "-" ແຕ່ບໍ່ໃຫ້ເລີ່ມຕົ້ນ ຫຼື ລົງທ້າຍ ດ້ວຍເຄື່ອງໝາຍນີ້;

10. ລະຫັດຊື່ອິນເຕີເນັດລາວ ບໍ່ໃຫ້ເລີ່ມຕົ້ນດ້ວຍ "xn--";

11. ລະຫັດຊື່ອິນເຕີເນັດລາວ ທີ່ຈົດທະບຽນໃນແຕ່ລະຂັ້ນບໍ່ໃຫ້ຍາວເກີນ 63 ຕົວອັກສອນ ແລະ ບໍ່ໃຫ້ໃຊ້ເຄື່ອງໝາຍພິເສດ (ເຊັ່ນ:~!@#$%^&*()_+{}[]V, ແລະ ອື່ນໆ) ຫຼື ຍະຫວ່າງ.

**ມາດຕາ 8 ຂັ້ນຕອນການຈົດທະບຽນລະຫັດຊື່ອິນເຕີເນັດລາວ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການຈົດທະບຽນລະຫັດຊື່ອິນເຕີເນັດລາວ ແມ່ນໃຫ້ຈົດທະບຽນຜ່ານປ້ອງບໍລິການ ຫຼື ຊ່ອງທາງບໍລິການອື່ນ ຂອງນາຍທະບຽນລະຫັດຊື່ອິນເຕີເນັດລາວ ທີ່ໄດ້ຮັບອະນຸຍາດ ຈາກກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ຕ້ອງປະກອບຂໍ້ມູນ ຫຼື ເອກະສານຕ່າງໆ ຕາມແບບພິມທີ່ກຳນົດໂດຍນາຍທະບຽນ ແຕ່ຕ້ອງມີຂໍ້ມູນພື້ນຖານ ດັ່ງນີ້:

1.ຊື່, ທີ່ຢູ່ຕິດຕໍ່, ອີເມວ ແລະ ເບີໂທ ຂອງເຈົ້າຂອງລະຫັດຊື່ອິນເຕີເນັດ;

2.ຊື່, ທີ່ຢູ່ຕິດຕໍ່, ອີເມວ ແລະ ເບີໂທ ຂອງຜູ້ຮັບຜິດຊອບບໍລິຫານຄຸ້ມຄອງ, ການເງິນ ແລະ ເຕັກນິກ;

3.ຂໍ້ມູນທາງເຕັກນິກ;

4.ຂໍ້ມູນອື່ນ ຕາມການກຳນົດຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 9 ການປ່ຽນແປງຂໍ້ມູນກ່ຽວກັບລະຫັດຊື່ອິນເຕີເນັດລາວ**

ການປ່ຽນແປງຂໍ້ມູນກ່ຽວກັບລະຫັດຊື່ອິນເຕີເນັດລາວ ປະຕິບັດ ດັ່ງນີ້:

1. ສຳລັບການປ່ຽນແປງຊື່ລະຫັດຊື່ອິນເຕີເນັດ ແມ່ນບໍ່ສາມາດປ່ຽນແປງໄດ້ ໂດຍຕ້ອງໄດ້ຈົດທະບຽນລະຫັດຊື່ອິນເຕີເນັດໃໝ່ ຕາມລະບຽບຫຼັກການທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

2. ໃນກໍລະນີ ປ່ຽນຊື່ຂອງອົງກອນ, ຫຼື ຊື່ຂອງບຸກຄົນທີ່ເປັນເຈົ້າຂອງ, ຊື່ຜູ້ຮັບຜິດຊອບບໍລິຫານຄຸ້ມຄອງ ຫຼື ບັນດາຂໍ້ມູນການຕິດຕໍ່ພົວພັນເຊັ່ນ: ຂໍ້ມູນທາງດ້ານທີ່ຢູ່, ເບີໂທລະສັບ, ໂທລະສານ, ອີເມວ, ເລກບັດປະຈຳຕົວ ຫຼື ເລກປຶ້ມສຳມະໂນຄົວ ຫຼື ໜັງສືຜ່ານແດນ (ພາສປອດ) ແມ່ນອົງກອນ ຫຼື ບຸກຄົນທີ່ກ່ຽວຂ້ອງ ຕ້ອງໄດ້ແຈ້ງໃຫ້ກັບນາຍທະບຽນຂອງຕົນຮັບຊາບ ເພື່ອຮັບປະກັນຄວາມຖືກຕ້ອງດ້ານຂໍ້ມູນ ແລະ ຮັບປະກັນການຄຸ້ມຄອງຮັກສາລະຫັດຊື່ອິນເຕີເນັດລາວ ຂອງທ່ານໄວ້.

**ມາດຕາ 10 ການໂອນຍ້າຍການໃຊ້ບໍລິການລະຫັດຊື່ອິນເຕີເນັດລາວ**

ການໂອນຍ້າຍການນຳໃຊ້ລະຫັດຊື່ອິນເຕີເນັດ ແມ່ນການໂອນຍ້າຍຂໍ້ມູນທັງໝົດຂອງລະຫັດຊື່ອິນເຕີເນັດ ຈາກນາຍທະບຽນປະຈຸບັນ ໄປຫານາຍທະບຽນອື່ນ ທີ່ໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ ໂດຍສອດຄ່ອງກັບເງື່ອນໄຂການໃຫ້ບໍລິການຂອງນາຍທະບຽນ.

ສຳລັບການໂອນຍ້າຍການນຳໃຊ້ລະຫັດຊື່ອິນເຕີເນັດລາວ ເຈົ້າຂອງລະຫັດຊື່ອິນເຕີເນັດລາວ ຕ້ອງເຮັດໜັງສືສະເໜີຫານາຍທະບຽນໃໝ່ ຕາມການເຫັນດີຂອງນາຍທະບຽນປະຈຸບັນ.

ລະຫັດຊື່ອິນເຕີເນັດລາວ ທີ່ບໍ່ສາມາດໂອນຍ້າຍໄດ້ມີເງື່ອນໄຂ ດັ່ງນີ້:

1. ມີອາຍຸການນຳໃຊ້ ໜ້ອຍກວ່າ ຫົກສິບ ວັນ ຫຼັງຈາກຈົດທະບຽນ;
2. ຢູ່ໃນຂະບວນການຍຸຕິທຳ;
3. ຖືກລະງັບການນຳໃຊ້.

**ມາດຕາ 11 ການສິ້ງຄືນການນຳໃຊ້ລະຫັດຊື່ອິນເຕີເນັດລາວ**

ການສົ່ງຄືນລະຫັດຊື່ອິນເຕີເນັດລາວ ມີກໍລະນີ ດັ່ງນີ້:

1. ເຈົ້າຂອງລະຫັດຊື່ອິນເຕີເນັດ ສະເໜີສົ່ງຄືນ;
2. ເຈົ້າຂອງລະຫັດຊື່ອິນເຕີເນັດ ປ່ອຍໃຫ້ລະຫັດຊື່ອິນເຕີເນັດໝົດອາຍຸການນຳໃຊ້;
3. ບໍ່ຊຳລະຄ່າໃຊ້ບໍລິການ ເພື່ອຕໍ່ອາຍຸການໃຊ້ບໍລິການ ຕາມລະບຽບການ.

ລະຫັດຊື່ອິນເຕີເນັດລາວ ທີ່ໝົດອາຍຸການນຳໃຊ້ ແລະ ບໍ່ຊຳລະຄ່າບໍລິການ ຈະຖືວ່າບໍ່ມີຄວາມປະສົງຕ້ອງການນຳໃຊ້ອີກຕໍ່ໄປ ແລະ ຖືເປັນການສະເໜີຂໍສົ່ງຄືນ.

ການສົ່ງຄືນທຸກກໍລະນີລະຫັດຊື່ອິນເຕີເນັດ ຈະຜ່ານບັນດາຂັ້ນຕອນທີ່ກຳນົດໄວ້ ແລະ ຈະກັບໄປສູ່ສະພາບປົກກະຕິ ເພື່ອໃຫ້ຜູ້ອື່ນສາມາດຈົດທະບຽນນຳໃຊ້ ຕໍ່ໄປໄດ້.

**ມາດຕາ 12 ການຢຸດໃຊ້ບໍລິການຊົ່ວຄາວຂອງການນຳໃຊ້ລະຫັດຊື່ອິນເຕີເນັດລາວ**

ການຢຸດໃຊ້ບໍລິການຊົ່ວຄາວຂອງການນຳໃຊ້ລະຫັດຊື່ອິນເຕີເນັດລາວ ມີກໍລະນີ ດັ່ງນີ້:

1. ການບໍ່ຊໍາລະຄ່າໃຊ້ບໍລິການ ຫຼັງຈາກໄດ້ຮັບການແຈ້ງເຕືອນຈາກນາຍທະບຽນ ລະຫັດຊື່ອິນເຕີເນັດລາວ ໃນໄລຍະເວລາ ສາມສິບ ວັນ;

2. ການກະທຳຜິດຕໍ່ຂໍ້ກຳນົດກົດລະບຽບ ແລະ ໄດ້ຮັບການແຈ້ງເຕືອນ ເພື່ອໃຫ້ປັບປຸງແກ້ໄຂຄືນໃຫ້ຖືກຕ້ອງ;

3. ອາດເກີດຈາກການຮ້ອງຟ້ອງ ອັນເນື່ອງມາຈາກການມີຂໍ້ຂັດແຍ່ງກ່ຽວກັບລະຫັດຊື່ອິນເຕີເນັດ ໂດຍມີຄຳສັ່ງຂອງສານ;

ການຢຸດນຳໃຊ້ຊົ່ວຄາວ ແມ່ນຍັງອະນຸຍາດໃຫ້ເຈົ້າຂອງສາມາດຍື່ນຂໍຈົດທະບຽນຄືນໄດ້ ແຕ່ບໍ່ໃຫ້ກາຍກຳນົດຊ່ວງໄລຍະເວລາທີ່ລະບຸໄວ້, ໃນກໍລະນີກາຍກຳນົດເວລາ ລະຫັດຊື່ອິນເຕີເນັດ ດັ່ງກ່າວຈະເຂົ້າສູ່ຂັ້ນຕອນຂອງການຢຸດເຊົາການນຳໃຊ້ຢ່າງຖາວອນ.

ອີງຕາມການສະເໜີເປັນລາຍລັກອັກສອນຈາກບັນດາໜ່ວຍງານລັດທີ່ມີອຳນາດ ຫຼື ລະເມີດຕໍ່ຂໍ້ຕົກລົງສະບັບນີ້, ການຢຸດເຊົານຳໃຊ້ຊົ່ວຄາວຈະມີຜົນທັນທີ.

**ມາດຕາ 13 ການຢຸດຖາວອນ ແລະ ຖອນສິດນຳໃຊ້ລະຫັດຊື່ອິນເຕີເນັດລາວ**

ການຢຸດຖາວອນ ແລະ ຖອນສິດນຳໃຊ້ລະຫັດຊື່ອິນເຕີເນັດລາວ ປະຕິບັດ ດັ່ງນີ້:

1. ການຢຸດໃຊ້ບໍລິການລະຫັດຊື່ອິນເຕີເນັດຖາວອນ ແມ່ນການຢຸດເຊົາແບບຖາວອນ ອາດເກີດຈາກຫຼາຍສາເຫດເຊັ່ນ: ເກີດຈາກການບໍ່ຊໍາລະຄ່າບໍລິການຕາມລະບຽບການ ແລະ ທັນກັບກຳນົດເວລາທີ່ທາງນາຍທະບຽນກຳນົດໄວ້ ຫຼື ເປັນການປະຕິບັດຕາມຄຳສັ່ງ ຫຼື ຄຳຕັດສິນຂອງສານ. ກໍລະນີ ຂອງການຢຸດນຳໃຊ້ຖາວອນ ລະຫັດຊື່ອິນເຕີເນັດຈະກັບມາເປັນກຳມະສິດຂອງສູນອິນເຕີເນັດແຫ່ງຊາດ, ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ຖ້າຕ້ອງການນຳໃຊ້ໃໝ່ ຈະຕ້ອງໄດ້ຈົດທະບຽນຄືນໃໝ່ຕາມລະບຽບຂັ້ນຕອນຂອງການຈົດທະບຽນນຳໃຊ້ ລະຫັດຊື່ອິນເຕີເນັດ.

2. ການຖອນສິດນຳໃຊ້ລະຫັດຊື່ອິນເຕີເນັດ ແມ່ນການຖອດຖອນສິດການນຳໃຊ້ລະຫັດຊື່ອິນເຕີເນັດ ອັນເນື່ອງມາຈາກການລະເມີດຕໍ່ກົດໝາຍ ແລະ ລະບຽບການ ໂດຍໄດ້ຮັບການແຈ້ງເຕືອນ ເພື່ອໃຫ້ປັບປຸງແກ້ໄຂແລ້ວ ແຕ່ວ່າບໍ່ດຳເນີນການແກ້ໄຂ ຫຼື ມີຄຳສັ່ງຂອງສານ.

3. ລະຫັດຊື່ອິນເຕີເນັດລາວຈະຖືກຢຸດໃຊ້ບໍລິການຖາວອນ ຫຼື ຖອນສິດນຳໃຊ້ ໃນກໍລະນີທີ່ລະເມີດ ດັ່ງນີ້:

- ອີງຕາມການສະເໜີເປັນລາຍລັກອັກສອນ ຈາກໜ່ວຍງານທີ່ມີອຳນາດຂອງລັດ ຫຼື ຕາມຜົນການຕັດສິນຂອງສານ ຫຼື ລະເມີດ ຕໍ່ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
- ລະເມີດມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ຫຼື ຕາມການຕັດສິນຂອງໜ່ວຍງານທີ່ມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງ, ການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງຊັດເຈນໃນເວລາຈົດທະບຽນ, ກໍລະນີ ການຈົດທະບຽນລະຫັດຊື່ອິນເຕີເນັດລາວບໍ່ຖືກຕ້ອງຕາມລະບຽບຫຼັກການ ຫຼື ຕາມຊື່ຂອງອົງການຈັດຕັ້ງພາກລັດ;
- ລະຫັດຊື່ອິນເຕີເນັດຈະຖືກຢຸດ ແລະ ຖອນສິດ ການນຳໃຊ້ ພາຍຫຼັງທີ່ໄດ້ກ່າວເຕືອນເປັນລາຍລັກອັກສອນແຕ່ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ດັ່ງກ່າວຍັງສືບຕໍ່ຝ່າຝືນ.

ອີງຕາມການສະເໜີເປັນລາຍລັກອັກສອນຈາກບັນດາໜ່ວຍງານລັດທີ່ມີອຳນາດ ຫຼື ລະເມີດຕໍ່ຂໍ້ຕົກລົງສະບັບນີ້, ການຢຸດເຊົານຳໃຊ້ ແລະ ຍຶດຖອນລະຫັດຊື່ອິນເຕີເນັດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ຄືນຕາມໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 4
## ລະຫັດຊື່ອິນເຕີເນັດສາກົນ

**ມາດຕາ 14 ຫຼັກການຈົດທະບຽນລະຫັດຊື່ອິນເຕີເນັດສາກົນ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ສາມາດຈົດທະບຽນລະຫັດຊື່ອິນເຕີເນັດສາກົນ ໂດຍປະຕິບັດຕາມລະບຽບຫຼັກການຂໍນຳໃຊ້ລະຫັດຊື່ອິນເຕີເນັດສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 15 ການນຳໃຊ້ລະຫັດຊື່ອິນເຕີເນັດສາກົນ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ສາມາດນຳໃຊ້ລະຫັດຊື່ອິນເຕີເນັດສາກົນ ເພື່ອການເຄື່ອນໄຫວວຽກງານຕາມຈຸດປະສົງຂອງຕົນ.

## ໝວດທີ 5
## ການຂໍອະນຸຍາດດຳເນີນທຸລະກິດໃຫ້ບໍລິການ ຈົດທະບຽນລະຫັດຊື່ອິນເຕີເນັດ

**ມາດຕາ 16 ປະເພດການໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ**

ຜູ້ໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ ຫຼື ເອີ້ນວ່າ ນາຍທະບຽນ ປະກອບມີ 2 ປະເພດ ດັ່ງນີ້:

1. ນາຍທະບຽນລະຫັດຊື່ອິນເຕີເນັດລາວ;
2. ນາຍທະບຽນລະຫັດຊື່ອິນເຕີເນັດສາກົນໃນລາວ.

**ມາດຕາ 17 ການອະນຸຍາດໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ດຳເນີນທຸລະກິດໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດລາວ ແລະ ລະຫັດຊື່ອິນເຕີເນັດສາກົນ ຢູ່ ສປປ ລາວ ຕ້ອງຂໍອະນຸຍາດນຳ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 18 ເງື່ອນໄຂການຂໍດຳເນີນທຸລະກິດການໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ**

ຜູ້ຂໍອະນຸຍາດໃຫ້ບໍລິການຈົດທະບຽນ ລະຫັດຊື່ອິນເຕີເນັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຕ້ອງມີວິຊາການທີ່ກ່ຽວຂ້ອງ ຢ່າງພຽງພໍກັບປະເພດ ແລະ ຂອບເຂດ ຂອງການບໍລິການ;
2. ຕ້ອງບໍ່ຢູ່ໃນຊ່ວງໄລຍະຖືກອາຍັດຊັບສິນ, ຢູ່ໃນຂະບວນການລົ້ມລະລາຍ ຫຼື ຖືກສານຕັດສິນເປັນຜູ້ລົ້ມລະລາຍ ຕາມກົດໝາຍຂອງ ສປປ ລາວ;
3. ປະຕິບັດຕາມເງື່ອນໄຂອື່ນ ທີ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດໃຫ້.

**ມາດຕາ 19 ການປະກອບເອກະສານຂໍໃບອະນຸຍາດ ແລະ ສ້າງສັນຍາ**

ການຂໍໃບອະນຸຍາດດໍາເນີນທຸລະກິດໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງ;
2. ສໍາເນົາທະບຽນວິສາຫະກິດ;
3. ສໍາເນົາບັດປະຈໍາຕົວ/ໜັງສືຜ່ານແດນ;
4. ຊີວະປະຫວັດຜູ້ບໍລິຫານ ແລະ ວິຊາການເຕັກນິກ;
5. ສໍາເນົາໃບທະບຽນວິສາຫະກິດ;
6. ບົດວິພາກເສດຖະກິດ ແລະ ເຕັກນິກ;
7. ໜັງສືຢັ້ງຢືນສະຖານະການເງິນ ຈາກທະນາຄານໃນ ສປປ ລາວ;
8. ໜັງສືຢັ້ງຢືນສິດໃນການໃຫ້ບໍລິການລະຫັດຊື່ອິນເຕີເນັດສາກົນ ຈາກອົງການຄຸ້ມຄອງລະຫັດຊື່ອິນເຕີເນັດສາກົນ ຫຼື ປະເທດທີ່ກ່ຽວຂ້ອງ;
9. ເອກະສານມອບສິດ (ຖ້າໃຫ້ຜູ້ອື່ນມາຂໍອະນຸຍາດແທນ);
10. ການສ້າງສັນຍາໃຫ້ບໍລິການນໍາຜູ້ຄຸ້ມຄອງລະຫັດຊື່ອິນເຕີເນັດສູງສຸດແຫ່ງຊາດລາວ;
11. ເອກະສານອື່ນ ຕາມການກໍານົດຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 20 ອາຍຸ ໃບອະນຸຍາດ ແລະ ສັນຍາໃຫ້ບໍລິການ.**

ໃບອະນຸຍາດດໍາເນີນທຸລະກິດໃຫ້ບໍລິການຈົດທະບຽນ ລະຫັດຊື່ອິນເຕີເນັດ ມີອາຍຸນໍາໃຊ້ ຢ່າງຕໍ່າ ສາມ ປີ ແລະ ສູງສຸດບໍ່ເກີນ ສິບ ປີ ນັບແຕ່ວັນທີອອກໃບອະນຸຍາດ ເປັນຕົ້ນໄປ.

ສັນຍາໃຫ້ບໍລິການຈົດທະບຽນລະຫັດຊື່ອິນຕີເນັດລາວ ມີອາຍຸສັນຍາເທົ່າກັບອາຍຸໃບອະນຸຍາດດໍາເນີນທຸລະກິດໃຫ້ບໍລິການຈົດທະບຽນ ລະຫັດຊື່ອິນເຕີເນັດ.

**ມາດຕາ 21 ການຕໍ່ໃບອະນຸຍາດ ແລະ ສັນຍາໃຫ້ບໍລິການ.**

ການຕໍ່ອາຍຸໃບອະນຸຍາດດໍາເນີນທຸລະກິດ ແລະ ສັນຍາໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ ຕ້ອງຍື່ນໃບຄໍາຮ້ອງຂໍຕໍ່ ກ່ອນວັນໝົດອາຍຸຢ່າງໜ້ອຍ ເກົ້າສິບ ວັນ ແລະ ຕ້ອງປະກອບເອກະສານ ດັ່ງນີ້ :

1. ໃບຄໍາຮ້ອງ;
2. ໜັງສືຢັ້ງຢືນການເສຍອາກອນຄົບຖ້ວນຈາກພາກສ່ວນທີ່ກ່ຽວຂ້ອງ;
3. ບົດລາຍງານການໃຫ້ບໍລິການ ໃນໄລຍະໃຫ້ບໍລິການຜ່ານມາ ຕາມອາຍຸໃບອະນຸຍາດຄັ້ງກ່ອນ;
4. ເອກະສານອື່ນ ຕາມການກໍານົດຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 22 ການປ່ຽນແປງ, ໂຈະ ຫຼື ຍຸບເລີກ ໃບອະນຸຍາດ.**

ນາຍທະບຽນລະຫັດຊື່ອິນເຕີເນັດ ທີ່ຕ້ອງການປ່ຽນແປງເນື້ອໃນໃບອະນຸຍາດດໍາເນີນກິດຈະການຂອງຕົນ ຕ້ອງຂໍອະນຸຍາດຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກ່ອນ ໂດຍມີການສະເໜີພ້ອມຊີ້ແຈງເຫດຜົນ ຢ່າງເປັນລາຍລັກອັກສອນ.

ໃນກໍລະນີ ນາຍທະບຽນລະຫັດຊື່ອິນເຕີເນັດຕ້ອງການ ໂຈະ ຫຼື ຍຸບເລີກ ໃບອະນຸຍາດດໍາເນີນກິດຈະການ ຕ້ອງແຈ້ງຕໍ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຢ່າງເປັນລາຍລັກອັກສອນ ຢ່າງໜ້ອຍ ເກົ້າສິບ ວັນ, ພ້ອມກັນນັ້ນ ຕ້ອງມີມາດຕະການແກ້ໄຂ, ໂອນຍ້າຍ ຫຼື ຊົດເຊີຍ ຕໍ່ຜູ້ຈົດທະບຽນລະຫັດຊື່ອິນເຕີເນັດ ພາຍໃນການຄຸ້ມຄອງຂອງຕົນ.

**ມາດຕາ 23 ການພິຈາລະນາອອກໃບອະນຸຍາດ**

ການພິຈາລະນາອອກໃບອະນຸຍາດໃນການຈົດທະບຽນລະຫັດຊື່ອິນເຕີເນັດ ຕ້ອງສໍາເລັດພາຍໃນກໍານົດເວລາ ສິບຫ້າ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

ໃນກໍລະນີ ເອກະສານບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຫຼື ບໍ່ມີເງື່ອນໄຂໄດ້ຮັບອະນຸຍາດ, ຕ້ອງແຈ້ງໃຫ້ຜູ້ຂໍອະນຸຍາດຊາບ ພາຍໃນກໍານົດເວລາ ເຈັດ ວັນ ລັດຖະການ.

## ໝວດທີ 6
## ສິດ ແລະ ໜ້າທີ່ ຜູ້ຈົດທະບຽນ ແລະ ນາຍທະບຽນ

**ມາດຕາ 24 ສິດ ແລະ ໜ້າທີ່ຂອງຜູ້ຈົດທະບຽນ**

ຜູ້ຈົດທະບຽນ ລະຫັດຊື່ອິນເຕີເນັດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໄດ້ຮັບການບໍລິການທີ່ມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ປອດໄພ;

2. ທວງຖາມ ແລະ ຮ້ອງຟ້ອງນາຍທະບຽນ ຕາມຂັ້ນຕອນຂອງຂະບວນການຍຸຕິທໍາ ເພື່ອໃຫ້ຄວາມເປັນທໍາຕໍ່ການສະໜອງບໍລິການແກ່ຜູ້ຈົດທະບຽນ;

3. ສະເໜີຕໍ່ອົງການຄຸ້ມຄອງ ແລະ ກວດກາ ກ່ຽວກັບ ຄຸນນະພາບການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການຕ່າງໆ ຂອງນາຍທະບຽນ;

4. ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ຢູ່ ໃນ ສປປ ລາວ ແລະ ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ທີ່ນໍາໃຊ້ລະຫັດຊື່ອິນເຕີເນັດສາກົນ ເພື່ອສ້າງເວັບໄຊເຜີຍແຜ່ຂໍ້ມູນຂ່າວສານ ຕ້ອງໄດ້ແຈ້ງໃຫ້ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຫຼື ໜ່ວຍງານອື່ນ ທີ່ກ່ຽວຂ້ອງຮັບຊາບ;

5. ຮັບຜິດຊອບທັງໝົດ ຕໍ່ໜ້າກົດໝາຍແຫ່ງ ສປປ ລາວ ຕໍ່ກັບຈຸດປະສົງການນໍາໃຊ້ການເຜີຍແຜ່ຂໍ້ມູນຂ່າວສານ ຫຼື ການສະໜອງຂໍ້ມູນອື່ນໆ ພ້ອມຮັບປະກັນວຽກງານການຈົດທະບຽນ ແລະ ການນໍາໃຊ້ ຕາມລະບຽບການ;

6. ຮັບຜິດຊອບຕໍ່ຂໍ້ມູນຂ່າວສານຂອງຕົນ ຊຶ່ງອາດເປັນຜົນກະທົບຕໍ່ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ສັງຄົມ ທີ່ເປັນການລະເມີດ ຕໍ່ກົດໝາຍ ແລະ ລະບຽບການ;

7. ຮັບຜິດຊອບກ່ຽວກັບການຄຸ້ມຄອງ, ການຮັກສາສິດໃນການນໍາໃຊ້ລະຫັດຊື່ອິນເຕີເນັດຂອງຕົນ ແລະ ຮັບຜິດຊອບໂດຍກົງ ຕໍ່ບັນຫາທີ່ເກີດຂຶ້ນ ອັນເນື່ອງມາຈາກການນໍາໃຊ້ລະຫັດຊື່ອິນເຕີເນັດຂອງຕົນ;

8. ແຈ້ງຂໍ້ມູນທີ່ພົວພັນເຖິງລະຫັດຊື່ອິນເຕີເນັດ ແລະ ລະບົບເຕັກນິກຂອງຕົນໃຫ້ຄົບຖ້ວນ ຕາມທີ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຫຼື ນາຍທະບຽນ ໄດ້ກໍານົດໄວ້;

9. ການນໍາໃຊ້ ຕ້ອງໄດ້ປະຕິບັດຕາມລະບຽບການ ແລະ ມີຄວາມຮັບຜິດຊອບ ໃນການຄຸ້ມຄອງລະຫັດຊື່ອິນເຕີເນັດພາຍໃຕ້ລະບົບລະຫັດຊື່ອິນເຕີເນັດຂອງຕົນ;

10. ຈ່າຍຄ່າບໍລິການຕາມລະບຽບການ;

11. ປະຕິບັດສິດ ແລະ ພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 25 ສິດ ແລະ ໜ້າທີ່ຂອງນາຍທະບຽນລະຫັດຊື່ອິນເຕີເນັດລາວ**

ນາຍທະບຽນລະຫັດຊື່ອິນເຕີເນັດລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ນາຍທະບຽນລະຫັດຊື່ອິນເຕີເນັດລາວ ທັງພາຍໃນ ແລະ ຕ່າງປະເທດ ສາມາດໂຄສະນາສົ່ງເສີມ ແລະ ໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດລາວ ໂດຍປະຕິບັດຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ຂອງປະເທດກ່ຽວຂ້ອງ;

2. ສາມາດຕິດຕັ້ງນຳໃຊ້ເຄື່ອງແມ່ຂ່າຍ ລະຫັດຊື່ອິນເຕີເນັດ (DNS Server) ຂອງຕົນ;

3. ມີເວັບໄຊເປັນຂອງຕົນເອງ ເພື່ອເປັນບ່ອນແຈ້ງຂໍ້ມູນຂ່າວສານຕ່າງໆ ແກ່ຜູ້ຊົມໃຊ້ເປັນຕົ້ນ: ລາຄາ, ປະເພດບໍລິການ ແລະ ຕ້ອງຮັບປະກັນຂໍ້ມູນໃຫ້ຖືກຕ້ອງກັບການບໍລິການຕົວຈິງໃນແຕ່ລະໄລຍະ;

4. ເຜີຍແຜ່ບັນດາເອກະສານນິຕິກຳ ທີ່ກ່ຽວຂ້ອງກັບການຈົດທະບຽນ, ການຄຸ້ມຄອງ ແລະ ການນຳໃຊ້ ລະຫັດຊື່ອິນເຕີເນັດລາວ;

5. ຢຸດເຊົາການນຳໃຊ້ລະຫັດຊື່ອິນເຕີເນັດຊົ່ວຄາວ ຫຼື ຖາວອນ ຕໍ່ຜູ້ທີ່ລະເມີດລະບຽບການ ຫຼື ມີຂໍ້ຂັດແຍ່ງກ່ຽວກັບລະຫັດຊື່ອິນເຕີເນັດລາວ ຕາມການສະເໜີຂອງໜ່ວຍງານທີ່ມີອຳນາດກ່ຽວຂ້ອງຂອງລັດຖະບານ ສປປ ລາວ ຫຼື ມີພຶດຕິກຳທີ່ອາດສົ່ງຜົນກະທົບຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

6. ມີສິດ ຢຸດຕິການໃຫ້ບໍລິການຈົດທະບຽນ ແລະ ການນຳໃຊ້ລະຫັດຊື່ອິນເຕີເນັດລາວຂອງ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ບໍ່ຊຳລະຄ່າຈົດທະບຽນ ຫຼື ຄ່າໃຊ້ບໍລິການລະຫັດຊື່ອິນເຕີເນັດລາວ ຕາມລະບຽບເງື່ອນໄຂການບໍລິການ;

7. ມີສິດປະຕິເສດການໃຫ້ບໍລິການການຈົດທະບຽນຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ລະເມີດ ແລະ ບໍ່ປະຕິບັດຕາມລະບຽບການຂອງການຈົດທະບຽນ ແລະ ນຳໃຊ້ລະຫັດຊື່ອິນເຕີເນັດລາວ;

8. ສະເໜີຂໍຕໍ່, ປ່ຽນແປງ, ໂຈະ ແລະ ຍຸບເລີກ ການດຳເນີນກິດຈະການຂອງຕົນ;

9. ຕ້ອງສະໜອງຂໍ້ມູນຂອງຜູ້ຈົດທະບຽນນຳໃຊ້ລະຫັດຊື່ອິນເຕີເນັດ ໃຫ້ຄົບຖ້ວນຕາມການສະເໜີຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

10. ປະຕິບັດຕາມລະບຽບການຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກ່ຽວກັບການເຊື່ອມຕໍ່ເຄືອຂ່າຍຢູ່ພາຍໃນ ແລະ ອອກສູ່ຕ່າງປະເທດ;

11. ເຄົາລົບສິດ ແລະ ເກັບຮັກສາຂໍ້ມູນສ່ວນຕົວຂອງຜູ້ຈົດທະບຽນ ໂດຍຕ້ອງມີລະບຽບການ ແລະ ລະບົບເຕັກນິກ ເພື່ອຮັກສາຂໍ້ມູນສ່ວນຕົວຂອງຜູ້ຈົດທະບຽນ;

12. ບໍ່ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ຈົດທະບຽນ ຍົກເວັ້ນມີການສະເໜີຂອງອົງການຈັດຕັ້ງລັດທີ່ມີສິດອຳນາດກ່ຽວຂ້ອງ;

13. ຮັບປະກັນການໃຫ້ບໍລິການຢ່າງມີຄຸນນະພາບ ແລະ ຖືກຕ້ອງຕາມທີ່ໄດ້ແຈ້ງໃນເວັບໄຊ;

14. ມີມາດຕະການໃນການແກ້ໄຂບັນຫາ ແລະ ຂໍ້ຂັດຂ້ອງທາງດ້ານເຕັກນິກ ໂດຍຕ້ອງແຈ້ງຜ່ານເວັບໄຊຂອງຕົນ ແລະ ລະບຸໃນເອກະສານການໃຫ້ບໍລິການຢ່າງຊັດເຈນ;

15. ລາຍງານກ່ຽວກັບການໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດຂອງຕົນ ຕາມການກຳນົດຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຢ່າງເປັນປົກກະຕິ;

16. ຢູ່ພາຍໃຕ້ການຄຸ້ມຄອງ ແລະ ກວດກາ ຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
17. ມອບພັນທະໃຫ້ລັດຕາມລະບຽບການ;
18. ປະຕິບັດສິດ ແລະ ພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງນາຍທະບຽນລະຫັດຊື່ອິນເຕີເນັດສາກົນ ຢູ່ໃນ ສປປ ລາວ**

ນາຍທະບຽນລະຫັດຊື່ອິນເຕີເນັດສາກົນຢູ່ພາຍໃນ ສປປ ລາວ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດຕາມລະບຽບການ ກ່ຽວກັບການຄຸ້ມຄອງນຳໃຊ້ຊັບພະຍາກອນອິນເຕີເນັດ ແລະ ການຄຸ້ມຄອງຂໍ້ມູນຂ່າວສານຜ່ານທາງລະບົບເຄືອຂ່າຍອິນເຕີເນັດ ຂອງ ສປປ ລາວ;

2. ຮັບຜິດຊອບຄຸ້ມຄອງລະຫັດຊື່ອິນເຕີເນັດສາກົນ ແລະ ຄວາມຖືກຕ້ອງຂອງຂໍ້ມູນຜູ້ຈົດທະບຽນນຳໃຊ້ ແລະ ແຈ້ງຕໍ່ໜ່ວຍງານຮັບຜິດຊອບທີ່ກ່ຽວຂ້ອງຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຮັບຊາບ;

3. ລາຍງານກ່ຽວກັບການໃຫ້ບໍລິການ ແລະ ຂໍ້ມູນການຈົດທະບຽນການນຳໃຊ້ລະຫັດຊື່ອິນເຕີເນັດ ທີ່ຕົນຄຸ້ມຄອງ ເປັນປະຈຳເດືອນ, ປະຈຳໄຕມາດ, ປະຈຳປີ, ແລະ ລາຍງານອື່ນ ຕາມທີ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດ ແລະ ສະເໜີ;

4. ສະໜອງຂໍ້ມູນ ແລະ ປະສານສົມທົບ, ໃຫ້ຄວາມຮ່ວມມືກັບບັນດາໜ່ວຍງານທີ່ມີໜ້າທີ່ຮັບຜິດຊອບຂອງລັດ ເພື່ອແກ້ໄຂບັນຫາທີ່ພົວພັນເຖິງລະຫັດຊື່ອິນເຕີເນັດສາກົນ ທີ່ຕົນຄຸ້ມຄອງ.

5. ປະຕິບັດສິດ ແລະ ພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 27 ຄ່າທຳນຽມ**

ຄ່າທຳນຽມ ແມ່ນການເກັບຄ່າສິດຄຸ້ມຄອງບໍລິຫານລັດ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂໍອະນຸຍາດດຳເນີນທຸລະກິດໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ ຊຶ່ງປະຕິບັດຕາມລະບຽບ ການວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການທີ່ ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 28 ຄ່າບໍລິການ**

ຄ່າບໍລິການ ແມ່ນການເກັບຄ່າບໍລິການຮັບໃຊ້ທາງດ້ານບໍລິຫານວິຊາການ ກ່ຽວກັບການຂໍອະນຸຍາດດຳເນີນທຸລະກິດໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ ຊຶ່ງປະຕິບັດຕາມລະບຽບການ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການທີ່ ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 8
## ຂໍ້ຫ້າມ

**ມາດຕາ 29 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິກຳບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;

2. ໃຫ້ບໍລິການຈົດທະບຽນ ລະຫັດຊື່ອິນເຕີເນັດລາວພາຍໃຕ້ຂັ້ນຂອງຕົນ ໃຫ້ກັບບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງອື່ນ;

3. ແຈ້ງຂໍ້ມູນບໍ່ເປັນຈິງ ຫຼື ບໍ່ປະກອບຂໍ້ມູນໃຫ້ຄົບຖ້ວນຖືກຕ້ອງຕາມລະບຽບໃນເວລາຈົດທະບຽນ ຫຼື ມີການປອມແປງຂໍ້ມູນກ່ຽວກັບລະຫັດຊື່ອິນເຕີເນັດ ພາຍໃຕ້ຂໍ້ຕົກລົງສະບັບນີ້;

4. ນຳໃຊ້ລະຫັດຊື່ອິນເຕີເນັດລາວຂອງຕົນ ເຂົ້າໃນວຽກງານທີ່ບໍ່ກ່ຽວຂ້ອງຂອງກົມກອງ, ໜ່ວຍງານ ຫຼື ໃຫ້ບຸກຄົນພາຍນອກນຳໃຊ້ໃນທາງທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດ;

5. ມອບໝາຍສິດການບໍລິຫານຄຸ້ມຄອງລະຫັດຊື່ອິນເຕີເນັດລາວຂອງຕົນໃຫ້ແກ່ບຸກຄົນອື່ນທີ່ບໍ່ແມ່ນ ພະນັກງານ ຫຼື ໜ່ວຍງານທີ່ຂຶ້ນກັບອົງການຈັດຕັ້ງຂອງຕົນນຳໃຊ້ ໂດຍບໍ່ແຈ້ງຂໍ້ມູນໃຫ້ນາຍທະບຽນ;

6. ນຳໃຊ້ ລະຫັດຊື່ອິນເຕີເນັດ ເຂົ້າໃນບັນດາກິດຈະກຳການເຄື່ອນໄຫວທີ່ມີລັກສະນະເຊັ່ນ: ຕໍ່ຕ້ານກັບລະບອບການເມືອງຂອງ ສປປ ລາວ, ສ້າງຄວາມປັ່ນປ່ວນວຸ້ນວາຍ, ສິ່ງພິມກະທົບ ກໍ່ໃຫ້ເກີດຄວາມບໍ່ສະຫງົບ ທາງດ້ານເສດຖະ ກິດ, ວັດທະນະທຳ, ສັງຄົມ, ທຳລາຍຮີດຄອງປະເພນີຂອງຊາດ, ຄຸກຄາມສິດເສລີພາບ ແລະ ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ແລະ ຂັດຂວາງການເຮັດວຽກຂອງລະບົບລະຫັດຊື່ອິນເຕີເນັດລາວ;

7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 30 ຂໍ້ຫ້າມສຳລັບພະນັກງານຄຸ້ມຄອງ ແລະ ກວດກາ**

ຫ້າມພະນັກງານຂະແໜງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງ, ຖ່ວງດຶງ ແລະ ປອມແປງເອກະສານ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວກັບຜູ້ດຳເນີນທຸລະກິດ;

3. ເປີດເຜີຍຂໍ້ມູນລັບ ຂອງນາຍທະບຽນ ຫລື ຜູ້ຈົດທະບຽນ ໂດຍບໍ່ໄດ້ຮັບອະນຸຍາດ;

4. ມີພຶດຕິກຳອື່ນທີ່ລະເມີດຕໍ່ກົດໝາຍ ຫຼື ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 31 ຂໍ້ຫ້າມສຳລັບນາຍທະບຽນ**

ຫ້າມນາຍທະບຽນ ໃຫ້ບໍລິການ ຈົດລະຫັດຊື່ອິນເຕີເນັດ ມີພຶດຕິກຳດັ່ງນີ້:

1. ດັດແກ້, ປອມແປງ ແລະ ໃຫ້ຜູ້ອື່ນຢືມ ຫຼື ເຊົ່າ ໃບອະນຸຍາດດຳເນີນທຸລະກິດໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ;

2. ຂັດຂວາງ ຫຼື ຊອກຫາວິທີການ ເພື່ອຂັດຂວາງຄວາມຕ້ອງການຈົດທະບຽນນຳໃຊ້ລະຫັດຊື່ອິນເຕີເນັດລາວ ຂອງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງໃດໜຶ່ງ ທີ່ມີສິດທິ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

3. ໃຫ້ບໍລິການນອກເໜືອຈາກປະເພດການໃຫ້ບໍລິການ, ຕາມທີ່ກຳນົດໃນໃບອະນຸຍາດ ຫຼື ຂອບເຂດທີ່ ກຳນົດໄວ້;

4. ໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດສາກົນ ທີ່ບໍ່ຕອບສະໜອງຕາມເງື່ອນໄຂໃດໜຶ່ງ ທີ່ລະບຸໄວ້ໃນ ລະບຽບການຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ວາງອອກ ເພື່ອໃຫ້ໄດ້ຮັບອະນຸຍາດໃຫ້ເປັນ ຜູ້ໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດສາກົນ ຢູ່ໃນ ສປປ ລາວ ຢ່າງຖືກຕ້ອງ;

5. ປ່ຽນແປງຂໍ້ມູນ ແຕ່ບໍ່ແຈ້ງຕໍ່ໜ່ວຍງານທີ່ມີໜ້າທີ່ຮັບຜິດຊອບຄຸ້ມຄອງຂອງ ກະຊວງ ໄປສະນີ, ໂທລະຄົມ ມະນາຄົມ ແລະ ການສື່ສານ;

6. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 9
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 32 ການແກ້ໄຂທາງບໍລິຫານ

ໃນກໍລະນີ ມີຂໍ້ຂັດແຍ່ງກ່ຽວກັບການຈົດທະບຽນ, ການອະນຸຍາດ ແລະ ການຄຸ້ມຄອງຮັກສາ ການນຳໃຊ້ ລະຫັດຊື່ອິນເຕີເນັດ, ທຸກຝ່າຍທີ່ກ່ຽວຂ້ອງ ຕ້ອງສົ່ງເອກະສານຄຳຮ້ອງຟ້ອງມາຍັງບັນດານາຍທະບຽນທີ່ຕົນໄດ້ຈົດທະບຽນ ນຳ ເພື່ອພິຈາລະນາແກ້ໄຂ.

ພາຍຫຼັງທີ່ໄດ້ຮັບໃບຄຳຮ້ອງ, ນາຍທະບຽນ ຕ້ອງພິຈາລະນາດຳເນີນການແກ້ໄຂ ຫຼື ສົມທົບກັບສູນອິນເຕີເນັດ ແຫ່ງຊາດ ເພື່ອດຳເນີນການກວດກາ, ພິຈາລະນາ, ແກ້ໄຂຄຳຮ້ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

### ມາດຕາ 33 ການແກ້ໄຂຂໍ້ຂັດແຍ່ງ

ໃນກໍລະນີ ມີຂໍ້ຂັດແຍ່ງທີ່ພົວພັນເຖິງທາງດ້ານການຄ້າ ຫຼື ສັງຄົມ ກ່ຽວກັບການນຳໃຊ້ລະຫັດຊື່ອິນເຕີເນັດລາວ ຂອງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ໃຫ້ດຳເນີນການແກ້ໄຂຕາມຂັ້ນຕອນການເຈລະຈາໄກ່ເກ່ຍ, ດຳເນີນການຜ່ານ ຄະນະກຳມະການຜູ້ເປັນກາງ ແລະ ດຳເນີນການຜ່ານການຮ້ອງຟ້ອງຕໍ່ສານ.

### ມາດຕາ 34 ການແກ້ໄຂທີ່ມີລັກສະນະສາກົນ

ໃນກໍລະນີ ມີຂໍ້ຂັດແຍ່ງກ່ຽວກັບວຽກງານລະຫັດຊື່ອິນເຕີເນັດທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມກົດໝາຍ ທີ່ກ່ຽວຂ້ອງຂອງ ສປປ ລາວ, ສົນທິສັນຍາ, ສັນຍາສາກົນ ທີ່ ສປປ ລາວເປັນພາຄີ ຫຼື ລະບຽບການແກ້ໄຂຂໍ້ແຍ່ງລະຫັດ ຊື່ອິນເຕີເນັດຂອງສາກົນທີ່ອົງການ ICANN ກຳນົດໄວ້ໃນ Uniform Domain-Name Dispute-Resolution Policy (UDRP).

## ໝວດທີ 10
## ການຄຸ້ມຄອງ ແລະ ກວດກາ ວຽກງານລະຫັດຊື່ອິນເຕີເນັດ

**ມາດຕາ 35 ອົງການຄຸ້ມຄອງ ແລະ ກວດກາ ວຽກງານລະຫັດຊື່ອິນເຕີເນັດ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານລະຫັດຊື່ອິນເຕີເນັດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ສູນອິນເຕີເນັດ ແຫ່ງຊາດ ແລະ ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 36 ສິດ ແລະ ໜ້າທີ່ ຂອງກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອະນຸມັດ, ຕໍ່, ປ່ຽນແປງ, ໂຈະ ແລະ ຖອນ ໃບອະນຸຍາດບໍລິການຈົດທະບຽນ ແລະ ນຳໃຊ້ລະຫັດຊື່ອິນເຕີເນັດ;
2. ຕິດຕາມ ແລະ ກວດກາການປະຕິບັດເງື່ອນໄຂ, ມາດຕະຖານ ແລະ ລະບຽບການ ຕາມຂໍ້ຕົກລົງສະບັບນີ້;
3. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຫຼື ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ສ້າງຖານຂໍ້ມູນລາຍຊື່ລະຫັດຊື່ອິນເຕີເນັດລາວ ທີ່ຕ້ອງສະຫງວນ;
5. ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບການໃຫ້ບໍລິການອິນເຕີເນັດ ເປັນຕົ້ນ ຄຸນນະພາບການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການຕ່າງໆ;
6. ເກັບຄ່າທຳນຽມ ແລະ ຄ່າບໍລິການ ໃນການອອກໃບອະນຸຍາດໃຫ້ບໍລິການຈົດທະບຽນ ແລະ ນຳໃຊ້ລະຫັດຊື່ອິນເຕີເນັດ ແລະ ຄ່າອື່ນໆ ຕາມກົດໝາຍ ແລະ ລະບຽບການ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 11
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 37 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 38 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ, ປະຕິບັດວິໄນ, ໂຈະ ຫຼື ຖອນ ໃບອະນຸຍາດ ແລະ ດຳເນີນຄະດີຕາມກົດໝາຍ ແລະ ລະບຽບການ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 39 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນໃນກໍລະນີດັ່ງນີ້:

1. ພະນັກງານຂອງລັດທີ່ເຮັດວຽກຄຸ້ມຄອງທຸລະກິດໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ ບໍ່ໃຫ້ຄວາມສະດວກ, ຊັກຊ້າ, ກີດໜ່ວງຖ່ວງດຶງໃນການພິຈາລະນາເອກະສານກ່ຽວກັບການດຳເນີນທຸລະກິດຂອງນາຍທະບຽນ ໂດຍບໍ່ມີເຫດຜົນ, ໃຊ້ມາລະຍາດ, ຄຳເວົ້າທີ່ບໍ່ເໝາະສົມ ແລະ ລະເມີດຂໍ້ຫ້າມໃນສະຖານເບົາ ຄັ້ງທຳອິດ;
2. ນາຍທະບຽນ ໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດບໍ່ໃຫ້ຄວາມສະດວກແກ່ຜູ້ຊົມໃຊ້ ຫຼື ລະເມີດຂໍ້ຫ້າມໃນສະຖານເບົາ ຄັ້ງທຳອິດ.

**ມາດຕາ 40 ມາດຕະການທາງວິໄນ**

ພະນັກງານຄຸ້ມຄອງທຸລະກິດໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດ ທີ່ລະເມີດຂໍ້ຫ້າມໃນຂໍ້ຕົກລົງສະບັບນີ້ທີ່ບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນຕາມແຕ່ລະກໍລະນີ ດັ່ງນີ້:

1. ຕຳໜິຫຼືກ່າວເຕືອນພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນທີ່ມີຕຳແໜ່ງຕໍ່າກ່ວາເກົ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນຕ້ອງສົ່ງຊັບສິນທີ່ຕົນໄດ້ມາຢ່າງບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 41 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝດັ່ງນີ້:

1. ດຳເນີນທຸລະກິດໃຫ້ບໍລິການຈົດທະບຽນ ລະຫັດຊື່ອິນເຕີເນັດ ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 5,000,000 ກີບ ຫາ 10,000,000 ກີບ;

2. ໃຫ້ບໍລິການຈົດທະບຽນ ລະຫັດຊື່ອິນເຕີເນັດລາວພາຍໃຕ້ຂັ້ນຂອງຕົນ ໃຫ້ກັບບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ 500,000 ກີບ ຫາ 2,500,000 ກີບ;

3. ປ່ຽນແປງຂໍ້ມູນ ແຕ່ບໍ່ແຈ້ງຕໍ່ໜ່ວຍງານທີ່ມີໜ້າທີ່ຮັບຜິດຊອບຄຸ້ມຄອງຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຈະຖືກປັບໃໝ 500,000 ກີບ ຫາ 2,500,000 ກີບ;

4. ແຈ້ງຂໍ້ມູນບໍ່ເປັນຈິງ ຫຼື ບໍ່ປະກອບຂໍ້ມູນໃຫ້ຄົບຖ້ວນຖືກຕ້ອງຕາມລະບຽບໃນເວລາຈົດທະບຽນ ຫຼື ມີການປອມແປງຂໍ້ມູນກ່ຽວກັບ ການຈົດທະບຽນນຳໃຊ້ລະຫັດຊື່ອິນເຕີລາວ ຈະຖືກປັບໃໝ 500,000 ກີບ ຫາ 5,000,000 ກີບ;

5. ນຳໃຊ້ລະຫັດຊື່ອິນເຕີເນັດລາວຂອງຕົນ ເຂົ້າໃນວຽກງານທີ່ບໍ່ກ່ຽວຂ້ອງຂອງກົມກອງ, ໜ່ວຍງານ ຫຼື ໃຫ້ບຸກຄົນພາຍນອກນຳໃຊ້ໃນທາງທຸລະກິດ ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 100,000 ກີບ ຫາ 500,000 ກີບ;

6. ມອບໝາຍສິດການບໍລິຫານຄຸ້ມຄອງລະຫັດຊື່ອິນເຕີເນັດລາວຂອງຕົນ ໃຫ້ແກ່ບຸກຄົນອື່ນ ທີ່ບໍ່ແມ່ນພະນັກງານ ຫຼື ໜ່ວຍງານທີ່ຂຶ້ນກັບອົງການຈັດຕັ້ງຂອງຕົນນຳໃຊ້ ໂດຍບໍ່ແຈ້ງຂໍ້ມູນໃຫ້ນາຍທະບຽນ ຈະຖືກປັບໃໝ 1,000,000 ກີບ ຫາ 5,000,000 ກີບ;

7. ນໍາໃຊ້ລະຫັດຊື່ອິນເຕີເນັດ ເຂົ້າໃນບັນດາກິດຈະກໍາການເຄື່ອນໄຫວທີ່ມີລັກສະນະເຊັ່ນ: ຕໍ່ຕ້ານກັບລະບອບການເມືອງຂອງ ສປປ ລາວ, ສ້າງຄວາມປັ່ນປ່ວນວຸ້ນວາຍ, ສິ່ງຜິນກະທົບກໍ່ໃຫ້ເກີດຄວາມບໍ່ສະຫງົບທາງດ້ານເສດຖະກິດ-ສັງຄົມ, ທໍາລາຍຮີດຄອງປະເພນີຂອງຊາດ, ຄຸກຄາມສິດເສລີພາບ ແລະ ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ແລະ ຂັດຂວາງການເຮັດວຽກຂອງລະບົບລະຫັດຊື່ອິນເຕີເນັດແຫ່ງຊາດ ຈະຖືກປັບໃໝ 1,000,000 ກີບ ຫາ 10,000,000 ກີບ;

8. ນາຍທະບຽນລະຫັດຊື່ອິນເຕີເນັດລາວ ບໍ່ໃຫ້ຄວາມຮ່ວມມື, ຂັດຂວາງ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງໂດຍຝືນຕໍ່ລະບຽບຫຼັກການ ແລະ ຄວາມຕ້ອງການຂອງຜູ້ກ່ຽວໃນການຂໍປ່ຽນນາຍທະບຽນ ຈະຖືກປັບໃໝ 1,000,000 ກີບ ຫາ 5,000,000 ກີບ;

9. ນາຍທະບຽນລະຫັດຊື່ອິນເຕີເນັດສາກົນ ຢູ່ໃນ ສປປ ລາວ ບໍ່ລາຍງານຂໍ້ມູນຂອງລະຫັດຊື່ອິນເຕີເນັດສາກົນທີ່ຕົນຄຸ້ມຄອງ ແລະ ໄດ້ໃຫ້ບໍລິການຈົດທະບຽນນໍາໃຊ້ມາຍັງ ກະຊວງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານຮັບຊາບຕາມລະບຽບການ ຈະຖືກປັບໃໝ 2,000,000 ກີບ ຫາ 5,000,000 ກີບ;

10. ບໍ່ຄຸ້ມຄອງເກັບຮັກສາ ຫຼື ບໍ່ມີມາດຕະການທີ່ຮັບປະກັນໃຫ້ລະບົບເຮັດວຽກຢ່າງມີສະຖຽນລະພາບ, ມີປະສິດທິພາບ, ມີຄຸນນະພາບ ແລະ ມີຄວາມປອດໄພ ຕໍ່ກັບບັນດາລະຫັດຊື່ອິນເຕີທີ່ຕົນໄດ້ໃຫ້ບໍລິການຈົດທະບຽນນໍາໃຊ້ ແລະ ຄຸ້ມຄອງ ໃນລະບົບເຄື່ອງແມ່ຂ່າຍໃຫ້ບໍລິການລະຫັດຊື່ອິນເຕີເນັດ (DNS Server) ຂອງຕົນຈະຖືກປັບໃໝ 500,000 ກີບ ຫາ 2,000,000 ກີບ;

11. ມີການຈົດທະບຽນຈັບຈອງ ຫຼື ຮຽກເກັບຄ່າທໍາຄືລະຫັດຊື່ອິນເຕີເນັດທຸກຮູບແບບ ໃນເວລາໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດລາວ ຈະຖືກປັບໃໝ 500,000 ກີບ ຫາ 2,000,000 ກີບ;

12. ນາຍທະບຽນຂັດຂວາງ ຫຼື ຊອກຫາວິທີການ ເພື່ອຂັດຂວາງຄວາມຕ້ອງການຈົດທະບຽນນໍາໃຊ້ລະຫັດຊື່ອິນເຕີເນັດຂອງບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຕາມສິດ ແລະ ຄວາມຖືກຕ້ອງຊອບທໍາຕາມກົດໝາຍ ຈະຖືກປັບໃໝ 500,000 ກີບ ຫາ 2,000,000 ກີບ;

13. ບໍ່ປະສານສົມທົບ, ບໍ່ອໍານວຍຄວາມສະດວກກ່ຽວກັບການໃຫ້ຄວາມຮ່ວມມືກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຫຼື ບັນດາໜ່ວຍງານທີ່ມີສິດອໍານາດຂອງລັດ ໃນການດໍາເນີນວຽກງານທີ່ພົວພັນເຖິງ ລະຫັດຊື່ອິນເຕີເນັດ ຈະຖືກປັບໃໝ 2,000,000 ກີບ ຫາ 10,000,000 ກີບ;

14. ໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດສາກົນ ທີ່ບໍ່ຕອບສະໜອງຕາມເງື່ອນໄຂໃດໜຶ່ງ ທີ່ລະບຸໄວ້ໃນລະບຽບການຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ວາງອອກ ເພື່ອໃຫ້ໄດ້ຮັບອະນຸຍາດໃຫ້ເປັນຜູ້ໃຫ້ບໍລິການຈົດທະບຽນລະຫັດຊື່ອິນເຕີເນັດສາກົນ ຢູ່ໃນ ສປປ ລາວ ຢ່າງຖືກຕ້ອງ ຈະຖືກປັບໃໝ 5,000,000 ກີບ ຫາ 15,000,000 ກີບ.

**ມາດຕາ 42 ມາດຕະການໂຈະ ແລະ ຖອນໃບອະນຸຍາດ**

ອົງການຄຸ້ມຄອງ ແລະ ກວດກາ ຈະໂຈະໃບອະນຸຍາດດໍາເນີນທຸລະກິດຈົດທະບຽນລະຫັດຊື່ອິນເຕີເນັດ ໃນກໍລະນີ ດັ່ງລຸ່ມນີ້:

1. ຖືກປັບໃໝ ແລ້ວຍັງສືບຕໍ່ກະທໍາຜິດ;
2. ບໍລິການເກີນປະເພດ ຫຼື ຂອບເຂດສິດຂອງໃບອະນຸຍາດ;

3. ປອມແປງ, ເຊື່ອງອໍາຂໍ້ມູນ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຕາມການກໍານົດຂອງອົງການຄຸ້ມຄອງ ແລະ ກວດກາ;
4. ບໍ່ຊໍາລະຄ່າທໍານຽມ, ຄ່າບໍລິການ ຫຼື ອາກອນ ໃຫ້ລັດ ຕາມລະບຽບການ;
5. ລະເມີດກົດໝາຍ ລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ຈະຖອນໃບອະນຸຍາດດໍາເນີນທຸລະກິດຈົດທະບຽນລະຫັດຊື່ອິນເຕີເນັດ ໃນກໍລະນີ ດັ່ງລຸ່ມນີ້:

1. ນໍາໃບອະນຸຍາດໃຫ້ຜູ້ອື່ນນໍາໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຖືກໂຈະໃບອະນຸຍາດແລ້ວບໍ່ປະຕິບັດຕາມອົງການຄຸ້ມຄອງ ແລະ ກວດກາ ແຈ້ງການ ພາຍໃນໄລຍະເວລາ ເກົ້າສິບ ວັນ;
3. ລະເມີດກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 43 ການຈັດຕັ້ງປະຕິບັດ**

ມອບໃຫ້ສູນອິນເຕີເນັດແຫ່ງຊາດ ແລະ ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເປັນຜູ້ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 44 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ໄດ້ນໍາລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ກໍານົດວ່າດ້ວຍ ການຄຸ້ມຄອງ ແລະ ການນໍາໃຊ້ ລະຫັດຊື່ອິນເຕີເນັດ ສະບັບ ເລກທີ 691/ປທສ, ລົງວັນທີ 25 ເມສາ 2014.

ລັດຖະມົນຕີ

ປອ. ທັນສະໄໝ ກົມມະສິດ